ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

--------------------------------

ກະຊວງອຸດສາຫະກຳ ແລະ ການຄ້າ

ຫ້ອງການ ເລກທີ 2176/ຫອຄ.ຄພນ

ນະຄອນຫຼວງວຽງຈັນ, ວັນທີ 07 ສິງຫາ 2014

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມແຜນການ ແລະ ການຮ່ວມມື
ຂາເຂົ້າ
ເລກທີ 841
ວັນທີ 13. 8. 14

## ແຈ້ງການ

ເຖິງ: ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ.

ເລື່ອງ: ການສະກັດກັ້ນການນຳເຂົ້າລູກໝູ ແລະໝູຊີ້ນ ຈາກປະເທດເພື່ອນບ້ານ.

- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 522/ນຍ, ລົງວັນທີ 23 ທັນວາ 2011;
- ອີງຕາມ ແຈ້ງການຂອງຫ້ອງວ່າການລັດຖະບານ ເລກທີ 933/ຫລບ.ກລຂ, ລົງວັນທີ 22/7/2014 ກ່ຽວກັບການສະກັດກັ້ນການນຳເຂົ້າລູກໝູ ແລະໝູຊີ້ນ ຈາກປະເທດເພື່ອນບ້ານ;
- ອີງຕາມແຈ້ງການຂອງກົມລ້ຽງສັດ ແລະປະມົງ ສະບັບເລກທີ 1240/ກປມ, ລົງວັນທີ 6 ສິງຫາ 2014 ການສະກັດກັ້ນການນຳເຂົ້າ ຊີ້ນໝູ, ລູກໝູ ແລະ ໝູຊີ້ນ ເຂົ້າ ສປປ ລາວ;
- ອີງຕາມ ການເປັນເອກະພາບກັນໃນກອງປະຊຸມ ຄັ້ງວັນທີ 6 ສິງຫາ 2014.

ເພື່ອເປັນການສະກັດກັ້ນການນຳເຂົ້າ ຊີ້ນໝູ, ລູກໝູ ແລະ ໝູຊີ້ນ ລວມທັງສິ້ນສ່ວນສັດ ທີ່ນຳເຂົ້າບໍ່ຖືກຕ້ອງຕາມລະບຽບກົດໝາຍ ເຊິ່ງອາດເປັນຜົນກະທົບຕໍ່ການຜະລິດໝູ ແລະ ການສະໜອງຊີ້ນໝູ ເພື່ອບໍລິໂພກຢູ່ພາຍໃນ ແລະຫຼີກລ້ຽງການນຳເຂົ້າເຊື້ອພະຍາດສັດ ແລະເຊື້ອໂລກຕ່າງໆ ເຂົ້າມາແຜ່ລະບາດຢູ່ປະເທດເຮົາ.

**ຫ້ອງການ ກະຊວງອຸດສາຫະກຳ ແລະ ການຄ້າ ຈຶ່ງອອກແຈ້ງການເຖິງພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ເພື່ອຈັດຕັ້ງປະຕິບັດ ດັ່ງນີ້:**

1. ໃຫ້ສົມທົບກັບຂະແໜງການກ່ຽວຂ້ອງຂັ້ນທ້ອງຖິ່ນຂອງຕົນ ໃນການຕິດຕາມ, ກວດກາ ແລະສະກັດກັ້ນການນຳເຂົ້າ ຊີ້ນໝູ, ລູກໝູ ແລະ ໝູຊີ້ນ ລວມທັງສິ້ນສ່ວນສັດ ຂອງບຸກຄົນ ຫຼືນິຕິບຸກຄົນ ທີ່ນຳເຂົ້າບໍ່ຖືກຕ້ອງຕາມລະບຽບກົດໝາຍ ຖ້າພົບເຫັນໃຫ້ປະຕິບັດຕາມມາດຕະການຕາມ ລະບຽບກົດໝາຍຢ່າງເຂັ້ມງວດ;

2. ມອບໃຫ້ກົມການຄ້າພາຍໃນ ສົມທົບພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ, ເປັນເຈົ້າການ ຊີ້ນຳ ແລະນຳພາຕິດຕາມ, ກວດກາ ຮ່ວມກັບບັນດາເມືອງ ເພື່ອສະກັດກັ້ນບັນຫາດັ່ງກ່າວ ຢ່າງເຂັ້ມງວດ.

(ແຈ້ງການຂອງຫ້ອງວ່າການລັດຖະບານ ເລກທີ 933/ຫລບ.ກລຂ, ລົງວັນທີ 22/7/2014 ກ່ຽວກັບ ການສະກັດກັ້ນການນຳເຂົ້າລູກໝູ ແລະໝູຊີ້ນ ຈາກປະເທດເພື່ອນບ້ານ ແລະ ແຈ້ງການຂອງກົມລ້ຽງສັດ ແລະປະມົງ ສະບັບເລກທີ 1240/ກປມ, ລົງວັນທີ 6 ສິງຫາ 2014 ການສະກັດກັ້ນການນຳເຂົ້າ ຊີ້ນໝູ, ລູກໝູ ແລະ ໝູຊີ້ນ ເຂົ້າ ສປປ ລາວ ຄັດຕິດມາພ້ອມນີ້)

ດັ່ງນັ້ນ, ຈິ່ງແຈ້ງມາຍັງທ່ານເພື່ອຊາບ ແລະປະຕິບັດຕາມແຈ້ງການສະບັບນີ້ຢ່າງດ້ວຍ.

ຫົວໜ້າຫ້ອງການ

ສົມຫວັງ ນິນທະວົງ

ບ່ອນສົ່ງ:

| | |
|---|---|
| ລັດຖະມົນຕີວ່າການ | 01 ສະບັບ ເພື່ອຊາບ; |
| ລັດຖະມົນຕີຊ່ວຍວ່າການ | 01 ສະບັບ ເພື່ອຊາບ; |
| ຫ້ອງວ່າການລັດຖະບານ(ກົມເລຂາ) | 01 ສະບັບ ເພື່ອຊາບ; |
| ກະຊວງກະສິກຳ ແລະ ປ່າໄມ້(ກົມລ້ຽງສັດ ແລະປະມົງ) | 01 ສະບັບ ເພື່ອຮັບຊາບ ແລະ ຊີ້ນຳການຈັດຕັ້ງປະຕິບັດ; |
| ຫ້ອງວ່າການປົກຄອງແຂວງໃນທົ່ວປະເທດ | 01 ສະບັບ ເພື່ອຮັບຊາບ ແລະ ຊີ້ນຳການຈັດຕັ້ງປະຕິບັດ; |
| ຫ້ອງການ, ສະຖາບັນ ແລະບັນດາກົມອ້ອມຂ້າງກະຊວງ ອຄ | 01 ສະບັບ ເພື່ອຊາບ; |
| ສຳເນົາ | 02 ສະບັບ. |